

# ສັງລວມຜົນຕອບແທນທັງໝົດ

*Mt. Bachelor* ຢູ່ໃກ້ກັບເມືອງ *Redmond,* ຫຼື

PCC Structurals, Inc. (PCC) ພູມໃຈນຳສະເໜີໂຄງການສິດທິປະໂຫຍດແບບຄົບວົງຈອນ ແລະ ປັບປ່ຽນໄດ້ໃນ ລາຄາທີ່ສາມາດຈ່າຍໄດ້.

**ໃຜມີສິດ:** ພະນັກງານເຕັມເວລາທີ່ເຮັດວຽກຫຼາຍກວ່າ 20 ຊົ່ວໂມງຕໍ່ອາທິດ ແລະ ຜູ້ເພິ່ງພາອາໄສທີ່ມີສິດຂອງເຂົາເຈົ້າ. ໂຄງການສິດທິປະໂຫຍດຂອງພວກເຮົາມີໃຫ້ແກ່ພະນັກງານ PCC ທີ່ມີສິດຢູ່ທຸກບ່ອນໃນທົ່ວພະແນກ.

**ເມື່ອເລີ່ມຮັບຜົນປະໂຫຍດ:** ຜົນປະໂຫຍດສ່ວນໃຫຍ່ຂອງ PCC ຂອງທ່ານຈະເລີ່ມຕົ້ນໃນມື້ທຳອິດຂອງເດືອນຖັດໄປຫຼັງຈາກວັນທີ່ທ່ານໄດ້ຮັບການຈ້າງງານ. ຕົວຢ່າງ, ຖ້າທ່ານຖືກຈ້າງໃນວັນທີ 10 ເມສາ, ທ່ານມີສິດໄດ້ຮັບຜົນປະໂຫຍດໃນວັນທີ 1 ພຶດສະພາ.

| ແຜນປະກັນ | ຈຸດສຳຄັນ | ໃຜຈ່າຍ |
|---|---|---|
| **ທາງການແພດ** | • ທາງເລືອກສຳລັບແຜນການປິ່ນປົວທາງການແພດສີ່ແບບ ຜ່ານບໍລິສັດ Cigna ແລະ Kaiser*<br>• ຄວາມຄຸ້ມຄອງຢາທີ່ມີໃບສັ່ງລວມມີຢູ່ໃນທາງເລືອກແຜນປະກັນທັງໝົດ<br>• ຄວາມຄຸ້ມຄອງທີ່ມີໃຫ້ແກ່ທ່ານ ແລະ ຜູ້ເພິ່ງພາອາໄສທີ່ມີສິດຂອງທ່ານ<br>* ມີໃຫ້ບໍລິການໃນ Oregon ແລະ California ຕາມສະຖານທີ່ | **ທ່ານ ແລະ PCC** — ເງິນປະກອບສ່ວນຂອງທ່ານຖືກຫັກອອກຈາກເຊັກເງິນເດືອນຂອງທ່ານ **ກ່ອນ** ຫັກອາກອນອອກ |
| **ປະກັນທາງການແພດເສີມ** | • ປະກັນອຸປະຕິເຫດ, ການເຈັບປ່ວຍຮ້າຍແຮງ ແລະ ຄ່າຊົດເຊີຍເມື່ອເຂົ້າໂຮງໝໍທີ່ສະເໜີໃຫ້ຜ່ານ Cigna<br>• ຄວາມຄຸ້ມຄອງທີ່ມີໃຫ້ແກ່ທ່ານ ແລະ ຜູ້ເພິ່ງພາອາໄສທີ່ມີສິດຂອງທ່ານ (ຖ້າມີ) | **ທ່ານ** — ເງິນປະກອບສ່ວນຂອງທ່ານຖືກຫັກອອກຈາກເຊັກເງິນເດືອນຂອງທ່ານ **ຫຼັງຈາກ** ຫັກອາກອນອອກ |
| **ແຂ້ວ** | • ທາງເລືອກສຳລັບແຜນການຮັກສາສຸຂະພາບແຂ້ວສາມແບບ ຜ່ານບໍລິການ Delta Dental ຂອງ Oregon ແລະ Kaiser*<br>• ຄວາມຄຸ້ມຄອງທີ່ມີໃຫ້ແກ່ທ່ານ ແລະ ຜູ້ເພິ່ງພາອາໄສທີ່ມີສິດຂອງທ່ານ<br>* ມີໃຫ້ໃນສະຖານທີ່ໃນລັດ Oregon | **ທ່ານ ແລະ PCC** — ເງິນປະກອບສ່ວນຂອງທ່ານຖືກຫັກອອກຈາກເຊັກເງິນເດືອນຂອງທ່ານ **ກ່ອນ** ຫັກອາກອນອອກ |
| **ສາຍຕາ** | • ທາງເລືອກສຳລັບແຜນກວດວັດສາຍຕາສອງແບບຜ່ານບໍລິສັດ Cigna<br>• ຄວາມຄຸ້ມຄອງທີ່ມີໃຫ້ແກ່ທ່ານ ແລະ ຜູ້ເພິ່ງພາອາໄສທີ່ມີສິດຂອງທ່ານ | **ທ່ານ ແລະ PCC** — ເງິນປະກອບສ່ວນຂອງທ່ານຖືກຫັກອອກຈາກເຊັກເງິນເດືອນຂອງທ່ານ **ກ່ອນ** ຫັກອາກອນອອກ |
| **ໂປຣແກຣມສຸຂະພາບ** | • ໂປຣແກຣມສຸຂະພາບສ່ວນບຸກຄົນ ຜ່ານ Virgin Pulse<br>• ດຳເນີນການປະເມີນທາງກາຍະພາບ ແລະ ສຸຂະພາບປະຈຳປີທີ່ຈຳເປັນໃຫ້ສຳເລັດ ເພື່ອຮັບເງິນລາງວັນມູນຄ່າ 200 ໂດລາສະຫະລັດ<br>• ເຄື່ອນໄຫວກິດຈະກຳທາງສຸຂະພາບອື່ນໆ ເພື່ອສະສົມຄະແນນເພີ່ມເຕີມ 300 ຄະແນນ ແລະ ຮັບເພີ່ມອີກ 300 ໂດລາສະຫະລັດ — ລວມເປັນເງິນລາງວັນສູງສຸດ 500 ໂດລາສະຫະລັດ | **PCC** |
| **365+ HUB** | • ທຸ້ມເທໃນການບໍລິການດູແລ ດ້ານສຸຂະພາບ<br>• ໃຫ້ຄວາມຊ່ວຍເຫຼືອທີ່ກ່ຽວຂ້ອງກັບປັນຫາການຮຽກຮ້ອງ ແລະ ການປຽບທຽບລາຄາບໍລິການ<br>• ມີໃຫ້ບໍລິການແກ່ທ່ານ ແລະ ຄອບຄົວ ຫາກທ່ານລົງທະບຽນໃນຄວາມຄຸ້ມຄອງທາງການແພດຂອງ PCC | **PCC** |

| ແຜນປະກັນ | ຈຸດສຳຄັນ | ໃຜຈ່າຍ |
| --- | --- | --- |
| **ແກຣມຊ່ວຍຮັກສາຊີວິດ (LAP)** | • ໄດ້ຮັບການໃຫ້ຄຳປຶກສາຕົວຕໍ່ຕົວ ແລະ ເກັບຮັກສາເປັນຄວາມລັບແບບບໍ່ເສຍຄ່າເຖິງສາມຄັ້ງຕໍ່ປີສຳລັບບັນຫາທີ່ຫຼາກຫຼາຍໂດຍຜ່ານ New York Life<br>• ຄວາມຄຸ້ມຄອງທີ່ມີໃຫ້ແກ່ທ່ານ ແລະ ສະມາຊິກໃນຄົວເຮືອນຂອງທ່ານ | **PCC** |
| **ບັນຊີຝາກປະຢັດເພື່ອສຸຂະພາບ (HSA)** | • ບັນຊີ HSA ອະນຸຍາດໃຫ້ທ່ານປະກອບສ່ວນເງິນກ່ອນເສຍອາກອນຈາກເຊັກເງິນເດືອນແຕ່ລະເດືອນ ເພື່ອຈ່າຍສຳລັບລາຍຈ່າຍທາງການແພດ, ແຂ້ວ ແລະ ສາຍຕາທີ່ມີສິດໂດຍບໍ່ຕ້ອງເສຍອາກອນ*<br>• ເງິນໃນບັນຊີ HSA ຂອງທ່ານຂະຫຍາຍໄປເລື້ອຍໆທຸກປີ ເພື່ອໃຫ້ທ່ານສາມາດສ້າງເງິນຝາກປະຢັດຂອງທ່ານໄດ້<br>• ທ່ານສາມາດລົງທະບຽນເຂົ້າໃນບັນຊີ HSA ໄດ້ ຖ້າທ່ານລົງທະບຽນເຂົ້າໃນແຜນປະກັນແບບມີຈຳນວນຕ້ອງຈ່າຍກ່ອນສູງພ້ອມບັນຊີ HSA ທີ່ສະເໜີໃຫ້ຜ່ານ Cigna ແລະ Kaiser<br>• ຄວາມຄຸ້ມຄອງທີ່ມີໃຫ້ແກ່ທ່ານ ແລະ ຜູ້ເພິ່ງພາອາໄສທີ່ມີສິດຕາມ IRS ຂອງທ່ານ<br>* ທ່ານສາມາດລົງທະບຽນເຂົ້າໃນບັນຊີ HSA ໄດ້ ຖ້າທ່ານລົງທະບຽນເຂົ້າໃນແຜນປະກັນແບບມີຈຳນວນຕ້ອງຈ່າຍກ່ອນສູງພ້ອມບັນຊີ HSA ທີ່ສະເໜີໃຫ້ຜ່ານ Cigna ແລະ Kaiser | **ທ່ານ ແລະ PCC** — PCC ຈະໃຫ້ເງິນ $750 ສຳລັບຄວາມຄຸ້ມຄອງສະເພາະລູກຈ້າງເທົ່ານັ້ນ ແລະ $1,500 ສຳລັບຄວາມຄຸ້ມຄອງລູກຈ້າງພ້ອມຜູ້ເພິ່ງພາອາໄສ.* ນອກນັ້ນທ່ານຍັງສາມາດເຮັດການປະກອບສ່ວນໄດ້<br>* ການປະກອບສ່ວນບັນຊີ HSA ຂອງ PCC ຈະຖືກແບ່ງສັດສ່ວນອີງຕາມເດືອນການຈ້າງງານຂອງທ່ານ |
| **ບັນຊີໃຊ້ຈ່າຍທີ່ປັບປ່ຽນໄດ້ (FSA)** | • ທ່ານມີສາມທາງເລືອກ FSA<br>• ຈ່າຍຄ່າດູແລເບິ່ງແຍງສຸຂະພາບ ຫຼື ຄ່າດູແລເບິ່ງແຍງຜູ້ເພິ່ງພາອາໄສທີ່ມີສິດໂດຍບໍ່ຕ້ອງເສຍອາກອນ<br>• ຄວາມຄຸ້ມຄອງທີ່ມີໃຫ້ແກ່ທ່ານ ແລະ ຜູ້ເພິ່ງພາອາໄສທີ່ມີສິດຕາມ IRS ຂອງທ່ານ | **ທ່ານ** — ເງິນປະກອບສ່ວນຂອງທ່ານຖືກຫັກອອກຈາກເຊັກເງິນເດືອນຂອງທ່ານ **ກ່ອນ** ຫັກອາກອນອອກ |
| **ປະກັນຄວາມພິການ** | • ການຄຸ້ມຄອງແມ່ນມີໃຫ້ແບບອັດຕະໂນມັດ | **PCC** |
| **ປະກັນຊີວິດ** | • ໃຫ້ຄວາມຄຸ້ມຄອງພື້ນຖານໂດຍອັດຕະໂນມັດ<br>• ທ່ານສາມາດຊື້ຄວາມຄຸ້ມຄອງເພີ່ມເຕີມສຳລັບຕົວທ່ານເອງ ແລະ ຜູ້ເພິ່ງພາອາໄສທີ່ມີສິດຂອງທ່ານໄດ້ | **ພື້ນຖານ: PCC**<br>**ເສີມ: ທ່ານ** — ເງິນປະກອບສ່ວນຂອງທ່ານຖືກຫັກອອກຈາກເຊັກເງິນເດືອນຂອງທ່ານ **ກ່ອນ** ຫັກອາກອນອອກ |
| **ປະກັນການເສຍຊີວິດ & ການສູນເສຍອະໄວຍະວະຈາກອຸປະຕິເຫດ (AD&D)** | • ໃຫ້ຄວາມຄຸ້ມຄອງພື້ນຖານໂດຍອັດຕະໂນມັດ<br>• ທ່ານສາມາດຊື້ຄວາມຄຸ້ມຄອງເພີ່ມເຕີມສຳລັບຕົວທ່ານເອງ ແລະ ຜູ້ເພິ່ງພາອາໄສທີ່ມີສິດຂອງທ່ານໄດ້ | **ພື້ນຖານ: PCC**<br>**ເສີມ: ທ່ານ** — ເງິນປະກອບສ່ວນຂອງທ່ານຖືກຫັກອອກຈາກເຊັກເງິນເດືອນຂອງທ່ານ **ກ່ອນ** ຫັກອາກອນອອກ |
| **ແຜນບຳນານ 401(k)** | • ທ່ານມີສິດເຂົ້າຮ່ວມໃນມື້ທີ່ທ່ານໄດ້ຮັບການຈ້າງງານ<br>• ເຮັດການປະກອບສ່ວນເພື່ອຊ່ວຍສ້າງຫຼັກປະກັນບຳນານຂອງທ່ານ<br>• PCC ເຮັດການປະກອບສ່ວນຄູ່ກັນ<br>• ນຳເງິນຝາກປະຢັດຂອງທ່ານເຂົ້າໃນທາງເລືອກການລົງທຶນຕ່າງໆ | **ທ່ານ ແລະ PCC** — ເງິນປະກອບສ່ວນຂອງທ່ານສາມາດຖືກຫັກອອກຈາກເຊັກເງິນເດືອນຂອງທ່ານ **ກ່ອນ ຫຼື ຫຼັງຈາກ** ຫັກອາກອນອອກ |
| **ປະກັນສັດລ້ຽງ** | • ປະກັນສັດລ້ຽງທີ່ສະເໜີໃຫ້ຜ່ານ Nationwide<br>• ຄວາມຄຸ້ມຄອງທີ່ມີໃຫ້ແກ່ທ່ານ ແລະ ຜູ້ເພິ່ງພາອາໄສທີ່ມີສິດຂອງທ່ານ (ຖ້າມີ) | **ທ່ານ** — ເງິນປະກອບສ່ວນຂອງທ່ານຈະຖືກຮຽກເກັບນຳທ່ານໂດຍກົງ, ບໍ່ຖືກຫັກອອກຈາກເຊັກເງິນເດືອນຂອງທ່ານ |
| **ການເປັນສະມາຊິກໂຮງບໍລິຫານຮ່າງກາຍ** | • ທຸກສາຂາມີໂປຣແກຣມການຄືນເງິນຄ່າອອກກຳລັງກາຍ | **ທ່ານ ແລະ PCC** — ທ່ານຈ່າຍຄ່າບໍລິການເອງ ແລະ PCC ຈະຈ່າຍຄືນເງິນຄ່າບໍລິການບາງສ່ວນ |

PCC